# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

### ວັນອາທິດ ທີ 27 ພຶສພາ 2007 ( 05-27-2007 )

## <u>ຈົ່ງຄືນດີກັນອີກ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ປະຖົມມະການ 50:15-21; ມັດທາຍ 5:21-26; ໂກໂລຊາຍ 3:12-15

**<u>ຄຳຖາມແຫ່ງຊີວິດ:</u>** ຂ້າພະເຈົ້າຈະຫາວິທີໃຫ້ຄືນດີກັນຢ່າງແທ້ຈິງໃນຍາບໍ່ຖືກຕ້ອງປອງດອງກັນໄດ້ຢ່າງໃດ?

**<u>ຄວາມຈິງໃນພຣະຄັມພີ:</u>** ຄຣິສຕຽນຕ້ອງເຮັດທຸກວິທີທາງໃນການຄືນດີກັບຄົນອື່ນ ໆ ໃນກໍຣະນີທີ່ບໍ່ຖືກຕ້ອງປອງດອງກັນ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ຂຽນຂື້ນເພື່ອຊ່ອຍທ່ານໃຫ້ເປັນຜູ້ສ້າງຄວາມສງົບສຸກທີ່ແທ້ຈິງ ແລະແກ້ໄຂບັນຫາຂໍ້ຂັດແຍ້ງສ່ວນຕົວຂອງແຕ່ລະຄົນໂດຍ:

- ການເຂົ້າໃຈເຖິງສິ່ງທີ່ເປັນສ່ວນຂອງການຄືນດີກັນແທ້ ໆ ແລະ
- ການຕັດສິນໃຈໃຫ້ຖືກຕ້ອງຕໍ່ການຢາກຄືນດີກັນໃນຍາມບໍ່ຖືກຕ້ອງປອງດອງກັນ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ " **<u>ແຜນການສອນ</u>** ", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**<u>ແນະນຳ:</u>** **" ການເປັນຜູ້ສ້າງຄວາມສງົບສຸກ " " ເປັນຜູ້ໃຫ້ອະພັຍຢ່າງແທ້ຈິງ "**

**ຄຳຖາມ:** 1. ທ່ານຈະເຕີມຄຳຂອງ " ການເອົາໃຫ້ມາໃສ່ຄຳວ່າ ຍົກໂທດໃຫ້ ( ອະພັຍໃຫ້ຢ່າງແທ້ຈິງຢ່າງໃດ?
2. ແມ່ນຫຍັງທີ່ທ່ານໄດ້ມາຫລັງຈາກມີຜູ້ໃຫ້ອະພັຍຄວາມຜິດຂອງທ່ານຢ່າງແທ້ຈິງແລ້ວ?

### 1. <u>ຕຽມຕົວທີ່ຈະເລີ້ມຕົ້ນຂື້ນໃໝ່:</u> ( ປະຖົມມະການ 50:15-21 )

1) ຂໍໃຫ້ນັກຮຽນອາສາສມັກອ່ານ ປະຖົມມະການ50:15-21. ແລ້ວຂຽນ " **ກັບຄືນດີ** " ໃສ່ກະດານ

2) **ຄຳຖາມ:** 1. ຄຳວ່າ: ກັບຄືນດີກັນນັ້ນມີຄວາມສຳຄັນ ຫລືຄວາມໝາຍຢ່າງໃດ?

3) **ອະທິບາຍ:** - ຄວາມບາບເຮັດໃຫ້ເຮົາຢ້ານທີ່ຈະຮ້ອງຂໍໃຫ້ຄົນອື່ນອະພັຍໃຫ້ເຮົາ.

- ພວກອ້າຍຂອງໂຢເຊບຂໍໃຫ້ໂຢເຊບຍົກໂທດໃຫ້ແກ່ເຂົາເຈົ້າໃນສິ່ງທີ່ເຂົາເຈົ້າເຮັດຜິດຕໍ່ລາວ.
- ໂຢເຊບໄດ້ອະພັຍໃຫ້ພວກອ້າຍຢ່າງແທ້ຈິງແລ້ວ ແຕ່ພວກອ້າຍຂອງລາວຍັງຢ້ານລາວຢູ່.

4. **ຄຳຖາມ:** 1. ທີ່ສິ່ງໃດທີ່ເຮັດໃຫ້ພວກອ້າຍຂອງໂຢເຊບຍັງຢ້ານກົວລາວຢູ່?

2. ພວກອ້າຍຂອງໂຢເຊບໄດ້ຮຽນຮູ້ຈາກການຍອມໃຫ້ອະພັຍບໍ່?
3. ໂຢເຊບໄດ້ເຮັດໃຫ້ຄອບຄົວຄືນດີກັນເຂົ້າສູ່ປົກກະຕິເໝືອນເດີມບໍ່?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ປະຖົມມະການ 50:15-21

1. ການສຳນຶກຜິດເຮັດໃຫ້ຄວາມສັມພັນ ການຄືນດີກັນໄດ້ຢ່າງໃດ?
2. ທ່ານຈະປະເມີນເຣື່ອງຄົນອື່ນວິພາກວິຈານທ່ານຍ້ອນການຄືນດີຢ່າງໃດ?
3. ບັນຫາອັນໃດທີ່ເກີດຂຶ້ນກັບທ່ານ ແລ້ວເຮັດໃຫ້ທ່ານສຳນຶກເຖິງພຣະເຈົ້າ ແລະ ການອະພັຍໂທດບາບໃຫ້ແກ່ທ່ານ ແລະເຮັດໃຫ້ທ່ານຢູ່ໃກ້ພຣະອົງຫລາຍຂຶ້ນ?

## 2. <u>ໃຫ້ການຄືນດີກັນເປັນລຳດັບນຶ່ງ:</u> (ມັດທາຍ 5:23-24)

1. ຂໍໃຫ້ອາສາສມັກອ່ານພຣະທັມ ມັດທາຍ 5:23-24

**ຄຳຖາມ:** 1. ໃຜເປັນຜູ້ຮັບຜິດຊອບໃນການຄືນດີກັນ?

2. ການຈົດຈຳໃນສິ່ງທີ່ພີ່ນ້ອງເຮັດຜິດຕໍ່ທ່ານ ໆ ໄດ້ເອົາເຂົ້າມາໃນໄວ້ໃນໃຈຂອງທ່ານບໍ່?

3) **ອະທິບາຍ:** ພຣະເຢຊູຄຣິດໄດ້ໃຫ້ພວກເຮົາຄືນດີກັນກັບພຣະເຈົ້າໂດຍທາງພຣະອົງ. ການນະມັສການ ແລະການຖືກຕ້ອງປອງດອງກັນເປັນການສຳຄັນ, ແຕ່ວ່າຜູ້ທີ່ບໍ່ຍອມຮັບ ແລະບໍ່ມີເວລາ ບໍ່ຖືກຕ້ອງປອງດອງກັບຄົນອື່ນຜູ້ນັ້ນກໍເປັນຄົນເຮັດຜິດ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** (ມັດທາຍ 5:23-24)

1. ເຮົາຈະນຳເອົາການຄືນດີກັນກັບພີ່ນ້ອງໃນໂລກນີ້ເຂົ້າມາປອງດອງກັນກັບພຣະເຈົ້າ ໃນສວັນໄດ້ຢ່າງໃດ?
2. ທ່ານຈະຊ່ອຍຜູ້ທີ່ກຳລັງຊອກຫາການຖືກຕ້ອງປອງດອງໄດ້ຢ່າງໃດ?
3. ວິທີໃດທີ່ທ່ານໃຊ້ໃນການສ້າງຜູ້ອື່ນກັບຄືນດີກັນໄດ້?

## 3. <u>ຍົກໂທດໃຫ້ຢ່າງໝົດສິ້ນ:</u> ໂກໂລຊາຍ 3:12-15

1. ຂໍໃຫ້ນັກຮຽນອາສາສມັກອ່ານພຣະທັມ ໂກໂລຊາຍ 3:12-15
2. **ອະທິບາຍ:** ບັນດາຜູ້ທີ່ເຊື່ອທັງຫລາຍຄວນຈະສວມໃຈເມດຕາ, ໃຈຖ່ອມ, ໃຈອ່ອນສຸພາບ ໃຈອົດທົນດົນນານ ຜ່ອນໜັກຜ່ອນເບົາເຊິ່ງກັນແລະກັນ ແລະຖ້າແມ່ນຜູ້ໃດມີເຣື່ອງຕໍ່ກັນ ກໍຈົ່ງ ຍົກໂທດໃຫ້ກັນແລະກັນ.

**ຄຳຖາມ:** 1. ຜູ້ທີ່ເຊື່ອທັງຫລາຍຄວນຈະສວມພຣະວິນຍານຢ່າງໃດ?

**ອະທິບາຍ:** " **ການໃຫ້ອະພັຍເປັນການເລືອກທີ່ດີ** " ຖ້າພວກເຮົາເອົາເຣື່ອງນີ້ມາສົນທະນາກັນແລ້ວຈະເຮັດ

ໃຫ້ພວກເຮົາມີຄວາມຮູ້ສຶກດີໃຈ ແລະກໍຈະໃຫ້ພວກເຮົາສາມາດລືມສິ່ງທີ່ຂຸ້ນເຄືອງໃນໃຈໄດ້.
- ໃນພຣະທັມໂກໂລຊາຍ 3:13 ໄດ້ທ້າທາຍຝ່າຍທີ່ເຮັດຜິດໃຫ້ເລີ້ມຕົ້ນຮັບໃນການຄືນດີກັນ.

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ໂກໂລຊາຍ 3:12-15

1. ການຊອກຫາຄວາມຜິດມີຜົນປໂຍດຫຍັງແກ່ການຄືນດີກັນ?
2. ທ່ານຈະຕອບສນອງຕໍ່ການຂໍໃຫ້ອະພັຍນັ້ນຢ່າງໃດ?
3. ທ່ານຖືກທ້າທາຍໃຫ້ອະພັຍໃຫ້ນັ້ນແມ່ນຫຍັງເປັນສິ່ງທີ່ຂັດຂວາງອັນຍິ່ງໃຫຍ່ຂອງທ່ານ?

**<u>ສລູບ</u>:**

1. ບົດຮຽນນີ້ໄດ້ສອນພວກທ່ານຫຼັງແດ່?
2. ໃຫ້ພວກເຮົາສ້າງສັນຕິສຸກຕໍ່ເນື່ອງໂດຍບໍ່ຢຸດ. ໜັງສືກ່ຽວກັບການສ້າງສັນຕິສຸກທີ່ສາມາດຊ່ອຍໃນການສ້າງສັນຕິສຸກທີ່ດີຊື່ວ່າ: **" Ken Sande's The peacemaker" Web site www.hispeace.org.**

## <u>ພຣະຄັມພີແຫ່ງຄວາມຈິງ:</u>

- ບັນດາຜູ້ທີ່ເຊື່ອທັງຫລາຍຕ້ອງເປັນຜູ້ທີ່ພ້ອມທີ່ຈະຄືນດີ ແລະນໍາຄວາມສັມພັນໃຫ້ກັບຜູ້ທີ່ເຮັດຜິດຕໍ່ຕົນສເມີ.
- ໂດຍການຖືກຕ້ອງປອງດອງກັນ, ຄຣິສຕຽນທັງຫລາຍຕ້ອງຮັກກັນຕາມແບບຂອງພຣະເຢຊູຄຣິດ.
- ຄຣິສຕຽນຄວນຍົກໂທດໃຫ້ກັນແລະກັນຢ່າງໝົດສິ້ນ ເໝືອນຢ່າງພຣະເຢຊູຊົງຍົກໂທດໃຫ້ທຸກຄົນສັນນັ້ນ.

( ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປ ແລະຮຽບຮຽງໂດຍ JH )